# ພິທີເປີດການເຊື່ອມໂຍງລະບົບຕູ້ ATM (Bconnex) ຢ່າງເປັນທາງການ

## ລະຫວ່າງ

# ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ແລະ ທະນາຄານ ເອັສທີ ຈຳກັດ

### ການຖອນເງິນສົດຈະບໍ່ເປັນເລື່ອງຍາກອີກຕໍ່ໄປພຽງທ່ານໃຊ້ ບັດ ATM ຂອງ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ແລະ ບັດ ATM ຂອງ ທະນາຄານເອັສທີ ຈຳກັດ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (BCEL) ແລະ ທະນາຄານ ເອັສທີ ຈຳກັດ (STB) ໄດ້ເປີດນຳໃຊ້ການເຊື່ອມໂຍງລະບົບຕູ້ ATM (BConnex) ຢ່າງເປັນທາງການ **ໃນວັນພະຫັດ ທີ 07 ພຶດສະພາ 2015 ທີ່ ໂຮງແຮມ ດອນຈັນພາເລດ**, ເປັນກຽດເຂົ້າຮ່ວມພິທີໂດຍ **ທ່ານ ນາງ ວັດທະນາ ດາລາລອຍ, ຮອງຜູ້ວ່າການ ທະນາຄານ ແຫ່ງ ສປປ ລາວ, ທ່ານ ດຣ ບຸນເຫຼືອ ສິນໄຊວໍລະວົງ ຫົວໜ້າກົມງົບປະມານ ກະຊວງການເງິນ, ປະທານສະພາບໍລິຫານ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ, ທ່ານ ພູຊົງ ຈັນທະຈັກ ຮັກສາການຜູ້ອຳນວຍການໃຫຍ່ BCEL, ທ່ານ ໄຊຍາ ໄຊສຸລິວົງ ຮອງປະທານສະພາ ບໍລິຫານ STB** , ນອກນັ້ນຍັງມີບັນດາ ຄະນະກົມຈາກ ທະນາຄານແຫ່ງ ສປປ ລາວ, ຄະນະອຳນວຍການຈາກ ທະນາຄານທຸລະກິດຕ່າງໆ, ຄະນະຜູ້ບໍລິຫານຈາກ BCEL ແລະ STB ພ້ອມດ້ວຍນັກຂ່າວ-ສື່ມວນຊົນຈາກຫຼາຍພາກສ່ວນ ແລະ ພາກສ່ວນທີ່ກ່ຽວຂ້ອງຫຼາຍພາກສ່ວນເຂົ້າຮ່ວມຢ່າງພ້ອມພຽງ.



ການຮ່ວມມືໃນການເຊື່ອມໂຍງເຊື່ອມໂຍງລະບົບຕູ້ ATM (BConnex) ດັ່ງກ່າວນີ້ແມ່ນເພື່ອສ້າງຄວາມສະດວກສະບາຍໃນການຖອນເງິນສົດຈາກຕູ້ ATM ໃຫ້ແກ່ລູກຄ້າຂອງ 2 ທະນາຄານ, ນັ້ນໝາຍຄວາມວ່າ ນັບແຕ່ມື້ນີ້ເປັນຕົ້ນໄປ ລູກຄ້າຂອງ STB ສາມາດຖອນເງິນສົດຈາກຕູ້ ATM ຂອງ BCEL ໄດ້ແລ້ວ ແລະ ລູກຄ້າຂອງ BCEL ກໍ່ສາມາດສາມາດຖອນເງິນສົດຈາກຕູ້ ATM ຂອງ STB ໄດ້ເຊັ່ນດຽວກັນ. ພ້ອມກັນນີ້ ການເຊື່ອມໂຍງລະບົບຕູ້ ATM ດັ່ງກ່າວ ຍັງເປັນບາດກ້າວສຳຄັນທີ່ຈະຊ່ວຍຍົກລະດັບການບໍລິການບັດ ATM ຂອງບັນດາທະນາຄານພາຍໃນໂດຍສະເພາະແມ່ນທະນາຄານທີ່ເຂົ້າຮ່ວມໃນໂຄງການເຊື່ອມໂຍງລະບົບຕູ້ ATM ທີ່ມີ BCEL ເປັນແມ່ຂ່າຍ ເຮັດໃຫ້ ລະບົບ ATM ມີລັກສະນະລວມສູນ. ນອກຈາກນັ້ນ, ບໍ່ສະເພາະແຕ່ສາມາດໃຊ້ບັດ ATM ຖອນເງິນສົດຈາກຕູ້ ATM ຂອງກັນ ແລະ ກັນໄດ້ເທົ່ານັ້ນ ຍັງເປັນການເຊື່ອມໂຍງລະບົບ ATM ໃຫ້ສາມາດຖອນບັດ **CUP** ໄດ້ອີກ ອັນຖືວ່າເປັນອີກບາດກ້າວໜຶ່ງໃນການພັດທະນາລະບົບການບໍລິການຂອງທະນາຄານພາຍໃນປະເທດ ແລະ ເປັນການກຽມຄວາມພ້ອມຂອງລະບົບທະນາຄານພາຍໃນສຳລັບການເປີດ AEC ໃນທ້າຍປີ 2015 ນີ້.

STB ເປັນທະນາຄານເອກະຊົນແຫ່ງ ທີ 2 ແລະ ເປັນທະນາຄານແຫ່ງທີ 6 ທີ່ໄດ້ສຳເລັດການເຊື່ອມຈອດລະບົບບໍລິການ ATM ຈາກ ທັງໝົດ 8 ທະນາຄານທີ່ໄດ້ລົງນາມໃນບົດບັນທຶກຄວາມເຂົ້າໃຈ ວ່າດ້ວຍການພັດທະນາລະບົບເຊື່ອມໂຍງຕູ້ ATM ໃນວັນທີ 23 ພະຈິກ 2012. ມາຮອດປະຈຸບັນ ໂຄງການເຊື່ອມໂຍງສຳເລັດແລ້ວ 6 ທະນາຄານລວມມີ **BCEL, LVB, APB, LDB, JDB** ແລະ **STB**. ໃນຕໍ່ໜ້າ, BCEL ຍັງຈະສືບຕໍ່ອອກແຮງຂຶ້ນອີກ ເພື່ອຂະຫຍາຍການເຊື່ອມໂຍງນີ້ໄປຍັງບັນດາທະນາຄານທີ່ໄດ້ລົງນາມໃນບົດບັນທຶກຄວາມເຂົ້າໃຈນຳກັນນັ້ນໃຫ້ສຳເລັດໂດຍໄວ, ເຊິ່ງເມື່ອສຳເລັດສົມບູນ ລະບົບນີ້ຈະກວມເອົາຫຼາຍກວ່າ 90% ຂອງລະບົບຕູ້ ATM ທົ່ວປະເທດ. ພ້ອມທັງເປີດຮັບເອົາ ແລະ ຂະຫຍາຍລະບົບເຊື່ອມໂຍງນີ້ໄປຍັງບັນດາທະນາຄານທີ່ສົນໃຈເຂົ້າຮ່ວມໃນລະບົບ, ພ້ອມນີ້ BCEL ຍັງຈະພັດທະນາລະບົບນີ້ ເພື່ອເຊື່ອມໂຍງກັບບັນດາທະນາຄານໃຫຍ່ໆໃນປະເທດເພື່ອນບ້ານ ຊຶ່ງປະຈຸບັນກຳລັງມີການດຳເນີນການຢູ່ໃນສ່ວນໃດໜຶ່ງແລ້ວ.

